ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ............/ລບ
ນະຄອນຫຼວງວຽງຈັນ, ວັນທີ..................

"ຮ່າງ"

# ດຳລັດ
# ວ່າດ້ວຍກະສິກຳແບບມີສັນຍາ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ ........./ກປ, ລົງວັນທີ ...........

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານກະສິກຳແບບມີສັນຍາ ເພື່ອສົ່ງເສີມການຜະລິດກະສິກຳເປັນສິນຄ້າ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງ ແນໃສ່ສ້າງລາຍຮັບທີ່ໝັ້ນຄົງ, ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ກະສິກຳແບບມີສັນຍາ**

ກະສິກຳແບບມີສັນຍາ ແມ່ນການຮ່ວມທຶນ ລະຫວ່າງ ບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ໂດຍມີຂໍ້ຜູກພັນຊຶ່ງກັນ ແລະ ກັນ ເພື່ອດຳເນີນການ ຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

**1. ທຶນ** ໝາຍເຖິງ ທີ່ດິນ, ແຮງງານ, ເງິນທຶນ, ປັດໄຈການຜະລິດ, ເຕັກນິກ, ເຄື່ອງມື ແລະ ພະຫະນະກົນຈັກກະສິກຳ, ການເກັບກ່ຽວ, ການປຸງແຕ່ງ ແລະ ການຕະຫຼາດ ທີ່ນຳໃຊ້ເຂົ້າໃນການສ້າງ ແລະ ປະຕິບັດສັນຍາ;

**2. ບຸກຄົນ** ໝາຍເຖິງ ພົນລະເມືອງລາວ ທີ່ມີອາຍຸ 18 ປີ ຂຶ້ນໄປ, ມີຄວາມສາມາດທາງດ້ານການປະພຶດ ແລະ ບໍ່ເປັນຄົນບ້າເສຍຈິດ;

**3. ນິຕິບຸກຄົນ** ໝາຍເຖິງ ວິສາຫະກິດປະສົມ ແລະ ວິສາຫະກິດເອກະຊົນ ທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ;

**4. ລວມໝູ່** ໝາຍເຖິງ ກຸ່ມ ແລະ ສະຫະກອນ;

**5. ສັນຍາ** ໝາຍເຖິງ ສາຍພົວພັນທາງດ້ານກົດໝາຍ ທີ່ເກີດຂຶ້ນຕາມສັນຍາ ກ່ຽວກັບການດຳເນີນກິດຈະການດ້ານກະສິກຳ ຊຶ່ງພາໃຫ້ຄູ່ສັນຍາ ມີ ສິດ ແລະ ພັນທະ ທີ່ຕ້ອງປະຕິບັດຕໍ່ກັນ ໂດຍການຮັບຮູ້ຈາກຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;

**6. ການປຸງແຕ່ງກະສິກຳ** ໝາຍເຖິງ ການແປຮູບວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ທີ່ເປັນຜົນຜະລິດກະສິກຳ ໃຫ້ເປັນສິນຄ້າກະສິກຳ ເພື່ອຮັກສາຄຸນນະພາບຂອງຜົນຜະລິດ, ເພີ່ມມູນຄ່າ ແລະ ທາງເລືອກໃຫ້ແກ່ຜູ້ບໍລິໂພກສິນຄ້າກະສິກຳ;

**7. ການບໍລິການກະສິກຳ** ໝາຍເຖິງ ການໃຫ້ບໍລິການຄຳປຶກສາ ແລະ ດຳເນີນການ ກ່ຽວກັບການ ປູກ, ລ້ຽງ, ການປົວລະບັດຮັກສາ, ເກັບກ່ຽວ, ເກັບຮັກສາ, ປຸງແຕ່ງ, ຈຳໜ່າຍສິນຄ້າກະສິກຳ ແລະ ອື່ນໆ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບກະສິກຳແບບມີສັນຍາ

ລັດ ຊຸກຍູ້ ແລະ ສົ່ງເສີມກະສິກຳແບບມີສັນຍາ ດ້ວຍການວາງນະໂຍບາຍ, ສ້າງກົນໄກ ແລະ ເງື່ອນໄຂ ອຳນວຍຄວາມສະດວກ ແກ່ການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວ, ເຂັ້ມແຂງ ເພື່ອສ້າງລາຍຮັບ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການສ້າງສຳພັນເສດຖະກິດ ລະຫວ່າງ ພາກລັດ, ຊາວກະສິກອນ, ກຸ່ມ, ສະຫະກອນ ແລະ ຜູ້ປະກອບການ ກ່ຽວກັບກະສິກຳແບບມີສັນຍາ ໃຫ້ເຂັ້ມແຂງ ແລະ ຍືນຍົງ.

### ມາດຕາ 5 ຫຼັກການກະສິກຳແບບມີສັນຍາ

ການເຄື່ອນໄຫວວຽກງານກະສິກຳແບບມີສັນຍາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມປອດໄພ, ເປັນມິດກັບສິ່ງແວດລ້ອມ ແລະ ສັງຄົມ;
4. ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຄູ່ສັນຍາກະສິກຳ;
5. ຮັບປະກັນຄວາມສະເໝີພາບ, ເປັນທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

### ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ພົວພັນ ແລະ ເຄື່ອນໄຫວ ກ່ຽວກັບວຽກງານກະສິກຳແບບມີສັນຍາ ຢູ່ ສປປ ລາວ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກະສິກຳແບບມີສັນຍາ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ, ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຄົ້ນຄວ້າວິທະ

ຍາສາດ, ການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ.

## ໝວດທີ 2
## ປະເພດກະສິກຳແບບມີສັນຍາ

**ມາດຕາ 8 ປະເພດກະສິກຳແບບມີສັນຍາ**

ປະເພດກະສິກຳແບບມີສັນຍາ ປະກອບດ້ວຍ:

1. ກະສິກຳແບບມີສັນຍາ ລະຫວ່າງ ລວມໝູ່ດ້ວຍກັນ;
2. ກະສິກຳແບບມີສັນຍາ ລະຫວ່າງ ລວມໝູ່ ກັບນິຕິບຸກຄົນ ຫຼື ບຸກຄົນ;
3. ກະສິກຳແບບມີສັນຍາ ລະຫວ່າງ ນິຕິບຸກຄົນດ້ວຍກັນ;
4. ກະສິກຳແບບມີສັນຍາ ລະຫວ່າງ ນິຕິບຸກຄົນ ກັບບຸກຄົນ;
5. ກະສິກຳແບບມີສັນຍາ ປະເພດອື່ນ.

**ມາດຕາ 9 ກະສິກຳແບບມີສັນຍາລະຫວ່າງລວມໝູ່ດ້ວຍກັນ**

ກະສິກຳແບບມີສັນຍາລະຫວ່າງລວມໝູ່ດ້ວຍກັນ ແມ່ນການຕົກລົງກັນ ລະຫວ່າງ ຄູ່ສັນຍາທີ່ເປັນອົງການຈັດຕັ້ງລວມໝູ່ ຫຼື ສະຫະກອນ ດ້ວຍກັນ ຊຶ່ງພາໃຫ້ສິດ ແລະ ພັນທະ ກ່ຽວກັບອົງປະກອບກະສິກຳແບບມີສັນຍາໃດໜຶ່ງ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ ຕາມກົດໝາຍ ແລະ ດຳລັດສະບັບນີ້.

**ມາດຕາ 10 ກະສິກຳແບບມີສັນຍາລະຫວ່າງລວມໝູ່ ກັບນິຕິບຸກຄົນອື່ນ ຫຼື ບຸກຄົນ**

ກະສິກຳແບບມີສັນຍາ ລະຫວ່າງ ລວມໝູ່ ກັບນິຕິບຸກຄົນອື່ນ ຫຼື ບຸກຄົນ ແມ່ນການຕົກລົງກັນລະຫວ່າງຄູ່ສັນຍາ ທີ່ເປັນອົງການຈັດຕັ້ງລວມໝູ່ ຫຼື ສະຫະກອນ ກັບນິຕິບຸກຄົນ ຫຼື ບຸກຄົນອື່ນ ຊຶ່ງພາໃຫ້ສິດ ແລະ ພັນທະ ກ່ຽວກັບອົງປະກອບກະສິກຳແບບມີສັນຍາໃດໜຶ່ງ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ ຕາມກົດໝາຍ ແລະ ດຳລັດສະບັບນີ້.

**ມາດຕາ 11 ກະສິກຳແບບມີສັນຍາ ລະຫວ່າງ ນິຕິບຸກຄົນດ້ວຍກັນ**

ກະສິກຳແບບມີສັນຍາ ລະຫວ່າງ ນິຕິບຸກຄົນດ້ວຍກັນ ແມ່ນການຕົກລົງກັນລະຫວ່າງຄູ່ສັນຍາ ທີ່ມີຖານະເປັນນິຕິບຸກຄົນດ້ວຍກັນ ເປັນຕົ້ນ ວິສາຫະກິດເອກະຊົນດ້ວຍກັນ, ວິສາຫະກິດເອກະຊົນກັບວິສາຫະກິດປະສົມ ຫຼື ວິສາຫະກິດປະສົມດ້ວຍກັນ ຊຶ່ງພາໃຫ້ສິດ ແລະ ພັນທະ ກ່ຽວກັບອົງປະກອບກະສິກຳແບບມີສັນຍາໃດໜຶ່ງ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ ຕາມກົດໝາຍ ແລະ ດຳລັດສະບັບນີ້.

**ມາດຕາ 12 ກະສິກຳແບບມີສັນຍາ ລະຫວ່າງ ນິຕິບຸກຄົນ ກັບບຸກຄົນ**

ກະສິກຳແບບມີສັນຍາ ລະຫວ່າງ ນິຕິບຸກຄົນ ກັບບຸກຄົນ ແມ່ນການຕົກລົງກັນລະຫວ່າງຄູ່ສັນຍາທີ່ເປັນນິຕິບຸກຄົນ ກັບບຸກຄົນ ເປັນຕົ້ນ ນິຕິບຸກຄົນທີ່ເປັນວິສາຫະກິດເອກະຊົນ ຫຼື ວິສາຫະກິດປະສົມ ກັບບຸກຄົນ ຊຶ່ງພາໃຫ້ສິດ ແລະ ພັນທະ ກ່ຽວກັບອົງປະກອບກະສິກຳແບບມີສັນຍາໃດໜຶ່ງ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ ຕາມກົດໝາຍ ແລະ ດຳລັດສະບັບນີ້.

## ໝວດທີ 3
## ອົງປະກອບກະສິກຳແບບມີສັນຍາ

**ມາດຕາ 13 ອົງປະກອບກະສິກຳແບບມີສັນຍາ**

ອົງປະກອບກະສິກຳແບບມີສັນຍາ ແມ່ນທຶນ ທີ່ບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ໄດ້ມີການນຳໃຊ້ເຂົ້າໃນການ ຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ ບົນພື້ນຖານກະສິກຳແບບມີສັນຍາປະເພດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້ ໂດຍແຕ່ລະຝ່າຍ ຕ້ອງປະກອບທຶນ ສອງ ຢ່າງຂຶ້ນໄປ.

ອົງປະກອບກະສິກຳແບບມີສັນຍາ ປະກອບດ້ວຍ ທີ່ດິນ, ແຮງງານ, ເງິນທຶນ, ປັດໄຈການຜະລິດ, ເຕັກນິກ, ການເກັບກ່ຽວ, ເຄື່ອງມື ແລະ ກົນຈັກການຜະລິດ, ການປຸງແຕ່ງ ແລະ ຕະຫຼາດ.

**ມາດຕາ 14 ທີ່ດິນ**

ທີ່ດິນ ແມ່ນທຶນອັນສຳຄັນຕົ້ນຕໍຂອງກະສິກຳແບບມີສັນຍາ ຊຶ່ງຄູ່ສັນຍາຝ່າຍໃດໜຶ່ງທີ່ໄດ້ຮັບສິດນຳໃຊ້ທີ່ດິນ ໄດ້ນຳມາປະກອບເປັນທຶນ ເພື່ອນຳໃຊ້ເຂົ້າໃນການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳປະເພດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດາລັດສະບັບນີ້.

ທີ່ດິນທີ່ຈະນຳມາປະກອບເປັນທຶນ ເພື່ອນຳໃຊ້ເຂົ້າໃນການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ ຕ້ອງມີເອກະສານຢັ້ງຢືນສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ເປັນຕົ້ນ ໃບຕາດິນ, ໃບຢັ້ງຢືນການນາໃຊ້ທີ່ດິນ, ໃບຢັ້ງຢືນການພັດທະນາທີ່ດິນ ຕາມທີ່ໄດ້ການົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

**ມາດຕາ 15 ແຮງງານ**

ແຮງງານ ແມ່ນພະລັງງານທາງດ້ານຮ່າງກາຍ ແລະ ມັນສະໝອງ ຂອງມະນຸດ ທີ່ນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ, ບົວລະບັດຮັກສາ, ເກັບກ່ຽວ, ເກັບຮັກສາ, ປຸງແຕ່ງກະສິກຳ ແລະ ການເຄື່ອນໄຫວອື່ນ ເພື່ອໃຫ້ເກີດຜົນທາງດ້ານເສດຖະກິດ ບົນພື້ນຖານສັນຍາກຳນົດ.

**ມາດຕາ 16 ເງິນທຶນ**

ເງິນທຶນ ແມ່ນເງິນທີ່ຄູ່ສັນຍາຝ່າຍໜຶ່ງ ສະໜອງໃຫ້ອີກຝ່າຍໜຶ່ງ ເພື່ອຈັດຊື້ ປັດໄຈການຜະລິດ, ເຄື່ອງມືການຜະລິດ, ກົນຈັກການຜະລິດ, ຜົນຜະລິດກະສິກຳ ຫຼື ໃຊ້ຈ່າຍແກ້ໄຂບັນຫາຄວາມຈຳເປັນອື່ນ ບົນພື້ນຖານສັນຍາກຳນົດ.

**ມາດຕາ 17 ປັດໄຈການຜະລິດ**

ປັດໄຈການຜະລິດ ແມ່ນ ແນວພັນພືດ, ແນວພັນສັດ, ຝຸ່ນ, ອາຫານສັດ, ຢາປາບສັດຕູພືດ, ຢາສັດຕະວະແພດ ແລະ ອື່ນໆ ທີ່ນຳໃຊ້ເຂົ້າໃນການ ປູກຝັງ, ລ້ຽງສັດ, ປົກປັກຮັກສາ, ເກັບກ່ຽວ, ເກັບຮັກສາ, ປຸງແຕ່ງ ແລະ ຈຳໜ່າຍສິນຄ້າກະສິກຳ ບົນພື້ນຖານການເຫັນດີຂອງຄູ່ສັນຍາ ແລະ ສອດຄ່ອງກັບກົດໝາຍ.

**ມາດຕາ 18 ເຕັກນິກ**

ເຕັກນິກ ແມ່ນການຝຶກອົບຮົມ, ເຜີຍແຜ່ ແລະ ສາທິດວິທີການນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ເຕັກນິກວິຊາການ ເຂົ້າໃນການ ປູກຝັງ, ລ້ຽງສັດ, ປົກປັກຮັກສາ, ເກັບກ່ຽວ, ເກັບຮັກສາ, ປຸງແຕ່ງ, ຈຳໜ່າຍສິນຄ້າກະສິກຳ ແລະ ວິທີການອື່ນທີ່ກ່ຽວຂ້ອງ ບົນພື້ນຖານມາດຕະຖານດ້ານວິຊາການ ແລະ ຄວາມຕ້ອງການຂອງຕະຫຼາດ ທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 19 ການເກັບກ່ຽວ**

ການເກັບກ່ຽວ ແມ່ນຂະບວນການນຳເອົາຜົນຜະລິດກະສິກຳ ມາເກັບຮັກສາ ໂດຍນຳໃຊ້ແຮງງານ, ອຸປະກອນ, ກົນຈັກ ລວມທັງວິທະຍາສາດ, ເຕັກໂນໂລຊີ ແລະ ເຕັກນິກວິຊາການ ບົນພື້ນຖານການເຫັນດີຂອງຄູ່ສັນຍາ, ສອດຄ່ອງກັບກົດໝາຍ ແລະ ດຳລັດສະບັບນີ້.

**ມາດຕາ 20 ເຄື່ອງມື ແລະ ກົນຈັກການຜະລິດ**

ເຄື່ອງມືການຜະລິດ ແມ່ນອຸປະກອນທີ່ນຳໃຊ້ເຂົ້າໃນການ ປູກຝັງ, ລ້ຽງສັດ, ການເກັບກ່ຽວ, ການເກັບຮັກສາ, ປຸງແຕ່ງ ແລະ ບໍລິການກະສິກຳ ເພື່ອນຳໃຊ້ເຂົ້າໃນກະສິກຳແບບມີສັນຍາ ບົນພື້ນຖານການເຫັນດີຂອງຄູ່ສັນຍາ.

ກົນຈັກການຜະລິດ ແມ່ນເຄື່ອງຈັກທີ່ນຳໃຊ້ເຂົ້າໃນການ ປູກຝັງ, ລ້ຽງສັດ, ການເກັບກ່ຽວ, ການເກັບຮັກສາ, ປຸງແຕ່ງ ແລະ ບໍລິການກະສິກຳ ເປັນຕົ້ນ ກົນຈັກນຳໃຊ້ເຂົ້າໃນການບຸກເບີກເນື້ອທີ່ດິນ, ໄຖ, ຄາດ, ປັກດຳ, ເສຍຫຍ້າ, ກ່ຽວ, ຟາດ, ເກັບຮັກສາ, ການຂົນສົ່ງຜະລິດຕະພັນສັດ, ພືດ ເພື່ອນຳໃຊ້ເຂົ້າໃນກະສິກຳແບບມີສັນຍາ ບົນພື້ນຖານການເຫັນດີຂອງຄູ່ສັນຍາ.

**ມາດຕາ 21 ການປຸງແຕ່ງ**

ການປຸງແຕ່ງ ແມ່ນການປ່ຽນແປງຮູບຮ່າງຂອງຜົນຜະລິດກະສິກຳ ເປັນຕົ້ນ ການປັບປຸງ, ການຄັດແຍກ, ການແປຮູບຜົນຜະລິດກະສິກຳ ໃຫ້ກາຍເປັນສິນຄ້າກະສິກຳທີ່ຖືກຕ້ອງຕາມມາດຕະຖານ ແລະ ເຕັກນິກວິຊາການ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ແລະ ເພີ່ມມູນຄ່າຂອງຜົນຜະລິດກະສິກຳ.

**ມາດຕາ 22 ຕະຫຼາດ**

ຕະຫຼາດ ແມ່ນບ່ອນ ທີ່ຈະນຳເອົາຜົນຜະລິດ ຫຼື ຜົນຜະລິດກະສິກຳທີປຸງແຕ່ງແລ້ວ ເພື່ອໄປ ຊື້ ຂາຍ ຫຼື ແລກປ່ຽນ ໂດຍມີການກຳນົດ ລາຄາ ສູງສຸດ ແລະ ຕ່ຳສຸດ, ປະລິມານ, ຄຸນນະພາບ ແລະ ເວລາການເກັບຊື້ ບົນພື້ນຖານການເຫັນດີຂອງຄູ່ສັນຍາ.

ໃນກໍລະນີຈຳເປັນ ລັດອາດຮັບເກັບຊື້ຜົນຜະລິດ, ຊົດເຊີຍ ຫຼື ຊ່ອຍເຫຼືອ ດ້ວຍຮູບການທີ່ເໝາະສົມ ເພື່ອຮັກສາລາຄາໃຫ້ໝັ້ນທ່ຽງ ແລະ ປົກປ້ອງຜົນປະໂຫຍດຂອງຄູ່ສັນຍາ ແລະ ສັງຄົມ ໄປຄວບຄູ່ກັບການສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ລົງທຶນເຂົ້າໃນການກໍ່ສ້າງຕະຫຼາດກະສິກຳຫຼາຍລະດັບ.

## ໝວດທີ 4
## ສັນຍາ

**ມາດຕາ 23 ລັກສະນະຂອງສັນຍາ**

ລັກສະນະຂອງສັນຍາ ປະກອບດ້ວຍ ສັນຍາ ສອງ ຝ່າຍ ແລະ ສັນຍາຫຼາຍ ຝ່າຍ.

ສັນຍາ ສອງ ຝ່າຍ ແມ່ນ ການຕົກລົງຂອງຄູ່ສັນຍາ ທີ່ເປັນການຈັດຕັ້ງລັດ ຫຼື ລວມໝູ່ ດ້ວຍກັນ, ນິຕິບຸກຄົນ ຫຼື ບຸກຄົນ ດ້ວຍກັນ, ນິຕິບຸກຄົນ ກັບບຸກຄົນ ຊຶ່ງພາໃຫ້ສິດ ແລະ ພັນທະຮ່ວມກັນ.

ສັນຍາຫຼາຍກວ່າສອງຝ່າຍ ແມ່ນ ການຕົກລົງຂອງຫຼາຍ ຝ່າຍໃນສັນຍາສະ ບັບດຽວ ຊຶ່ງພາໃຫ້ສິດ ແລະ ພັນທະ ຮ່ວມກັນ.

**ມາດຕາ 24 ເງື່ອນໄຂຂອງສັນຍາ**

ສັນຍາທີ່ສ້າງຂຶ້ນ ຕ້ອງເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ກຳນົດເປົ້າໝາຍຂອງສັນຍາໃຫ້ຊັດເຈນ, ມີຈິງ, ຖືກຕ້ອງຕາມກົດໝາຍ, ບໍ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ມາສາດປະຕິບັດໄດ້;

2. ຄູ່ສັນຍາມີຄວາມສະໝັກໃຈ ໂດຍປາສະຈາກການ ຫຼົງຜິດ, ຕົວະຍົວະຫຼອກລວງ, ບັງຄັບນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຫຼື ຄວາມອັບປະໂຫຍດຂອງຝ່າຍໃດໜຶ່ງ;

3. ຄູ່ສັນຍາ ມີຄວາມສາມາດທາງດ້ານການປະພຶດດ້ວຍຕົນເອງ;

4. ຄູ່ສັນຍາຝ່າຍໃດໜຶ່ງ ຕ້ອງປະກອບທຶນທີ່ເປັນ ທີ່ດິນ, ແຮງງານ, ປັດໄຈການຜະລິດ, ເຕັກນິກ, ການເກັບກ່ຽວ, ການປຸງແຕ່ງ ຫຼື ຕະຫຼາດ ແຕ່ ສອງ ຢ່າງຂຶ້ນໄປ.

**ມາດຕາ 25 ຮູບການສັນຍາ**

ສັນຍາ ຕ້ອງເຮັດເປັນລາຍລັກອັກສອນ ໂດຍລົງວັນທີ, ເດືອນ, ປີ, ມີລາຍເຊັນ ແລະ ແປະໂປ້ມືຂອງຄູ່ສັນຍາ ຫຼື ຜູ້ຕາງໜ້າຂອງຄູ່ສັນຍາ ພ້ອມທັງໄດ້ຮັບການຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າ ໄມ້ຂັ້ນເມືອງທີ່ກ່ຽວຂ້ອງ.

**ມາດຕາ 26 ເນື້ອໃນຂອງສັນຍາ**

ສັນຍາ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ວັນ, ເວລາ ແລະ ສະຖານທີ່ເຮັດສັນຍາ;
2. ຊື່, ນາມສະກຸນ ແລະ ບ່ອນຢູ່ຂອງຄູ່ສັນຍາ;
3. ເປົ້າໝາຍສັນຍາ, ລາຄາ, ກາບົດເວລາປະຕິບັດ, ການຊຳລະ ແລະ ການມາສິ່ງ;
4. ຊະນິດສິນຄ້າ, ມາດຕະຖານການຜະລິດ, ມາດຕະຖານສິນຄ້າ, ສະຖານທີສົ່ງ-ມອບສິນຄ້າປະລິມານ ແລະ ຄຸນນະພາບ ຂອງເປົ້າໝາຍສັນຍາ;
5. ສະຖານທີ່ປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ກັນຊາບ;
6. ສິດ ແລະ ພັນທະຂອງຄູ່ສັນຍາ, ຜົນສະທ້ອນຂອງການລະເມີດສັນຍາ;
7. ຮູບການ ແລະ ວິງການແກ້ໄຂຂໍ້ຂັດແຍ່ງ
8. ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ.

**ມາດຕາ 27 ການສະເໜີ ແລະ ການຕອບຮັບສັນຍາ**

ບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ທີ່ມີຈຸດປະສົງດາເນີນກິດຈະການກ່ຽວກັບກະສິກຳແບບມີສັນຍາປະເພດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້ ຕ້ອງດຳເນີນການປະເມີນຄວາມເປັນໄປໄດ້ໃນການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ ພ້ອມທັງຮ່າງສັນຍາເບື້ອງຕົ້ນ ຕາມແບບພິມທີ່ກະຊວງກະສິກຳ ແລະ ປ່າໄມ້ກຳນົດ ເພື່ອສະເໜີຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ລວມໝູ່ ທີ່ຕົນຢາກສ້າງສັນຍາຮ່ວມນັ້ນ.

ພາຍຫຼັງໄດ້ຮັບຄຳສະເໜີທີ່ເປັນຮ່າງສັນຍາແລ້ວ, ຜູ້ຮັບຮ່າງສັນຍານັ້ນ ຕ້ອງຄົ້ນຄວ້າເນື້ອໃນຮ່າງສັນຍາທີ່ສະເໜີມາ. ໃນກໍລະນີ ມີຈຸດປະສົງເຂົ້າຮ່ວມສັນຍາ ຕ້ອງແຈ້ງຕອບຜູ້ສະເໜີ ພາຍໃນກຳນົດເວລາ ຊາວ ວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ ພ້ອມທັງດຳເນີນການເຈລະຈາຕໍ່ລອງເງື່ອນໄຂດ້ານຕ່າງໆຢ່າງລະອຽດ ເພື່ອບັນລຸການຕົກລົງ ແລະ ເຊັນສັນຍາຮ່ວມກັນ. ໃນກໍລະນີກາຍກຳນົດເວລາດັ່ງກ່າວ ໃຫ້ຖືວ່າການສະເໜີສັນຍານັ້ນ ຖືກປະຕິເສດ ຫຼື ບໍ່ໄດ້ຮັບການເຫັນດີຈາກອີກຝ່າຍ.

**ມາດຕາ 28 ການເຊັນສັນຍາ**

ການເຊັນສັນຍາ ແມ່ນການລົງນາມໃສ່ສັນຍາ ພາຍຫຼັງຄູ່ສັນຍາໄດ້ມີການເຫັນດີເປັນເອກະພາບຕໍ່ກັບເນື້ອໃນ ແລະ ເງື່ອນໄຂຂອງສັນຍາທີ່ໄດ້ຮ່ວມກັນສ້າງຂຶ້ນ ໂດຍແມ່ນບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບສິດ ຕາມກົດໝາຍ ລົງລາຍເຊັນຮ່ວມກັນທັງສອງຝ່າຍ ຫຼື ຫຼາຍຝ່າຍ.

ພາຍຫຼັງເຊັນສັນຍາຮ່ວມກັນແລ້ວ, ຄູ່ສັນຍາ ຕ້ອງນຳເອົາສັນຍາດັ່ງກ່າວ ໄປສະເໜີຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງທີ່ກ່ຽວຂ້ອງບ່ອນທີ່ດິນຕັ້ງຢູ່ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນລົງລາຍເຊັນຮ່ວມກັນຂອງຄູ່ສັນຍາ ເພື່ອພິຈາລະນາ ແລະ ຢັ້ງຢືນຄວາມຖືກຕ້ອງກ່ຽວກັບການ ຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ.

**ມາດຕາ 29 ການຢັ້ງຢືນສັນຍາ**

ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງທີ່ກ່ຽວຂ້ອງ ຕ້ອງຄົ້ນຄວ້າ, ພິຈາລະນາ ແລະ ຢັ້ງຢືນສັນຍາດັ່ງກ່າວ ພາຍໃນກຳນົດເວລາ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ.

ໃນກໍລະນີເຫັນວ່າສັນຍາດັ່ງກ່າວ, ບໍ່ສອດຄ່ອງກັບເງື່ອນໄຂສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງດຳລັດສະບັບນີ້ ເປັນຕົ້ນ ກຳນົດກິດຈະການ ກ່ຽວກັບການຜະລິດ, ປຸງແຕ່ງ ຫຼື ບໍລິການກະສິກຳ ບໍ່ແຈ້ງ, ບໍ່ມີຄວາມຈິງ ຫຼື ບໍ່ສາມາດປະຕິບັດໄດ້ ຕ້ອງປະຕິເສດການສະເໜີດັ່ງກ່າວ ພ້ອມທັງແຈ້ງຕອບເປັນລາຍລັກອັກສອນແກ່ຜູ້ສະເໜີໄດ້ຮັບຊາບເຖິງເຫດຜົນຂອງການປະຕິເສດນັ້ນ.

ສັນຍາ ທີ່ຜ່ານການຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງທີ່ກ່ຽວຂ້ອງແລ້ວ, ຄູ່ສັນຍາສາມາດນຳເອົາສັນຍາດັ່ງກ່າວ ໄປຈົດທະບຽນສານ ເພື່ອຢັ້ງຢືນຄວາມຖືກຕ້ອງ ຕາມກົດໝາຍ.

**ມາດຕາ 30 ການປະຕິບັດສັນຍາ**

ການປະຕິບັດສັນຍາ ແມ່ນ ເປັນພັນທະ ແລະ ໜ້າທີ່ຂອງຄູ່ສັນຍາ ຕ້ອງໃຫ້ເລີ່ມປະຕິບັດນັບແຕ່ວັນໄດ້ຮັບການຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງທີ່ກ່ຽວຂ້ອງ ເປັນຕົ້ນໄປ.

ການປະຕິບັດສັນຍາຂອງແຕ່ລະຝ່າຍ ໃຫ້ອີງໃສ່ເນື້ອໃນທີ່ໄດ້ກຳນົດໄວ້ໃນສັນຍາ ໂດຍມີການປຶກສາຫາລືບັນຫາຕ່າງໆທີ່ຕິດພັນກັບການປະຕິບັດສັນຍາ ຢ່າງເປັນປົກກະຕິ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດສູງ. ໃນກໍລະນີຝ່າຍໃດໜຶ່ງເຫັນວ່າການຈັດຕັ້ງປະຕິບັດສັນຍາ ບໍ່ໄດ້ດຳເນີນໄປຕາມແຜນ ຫຼື ບໍ່ສອດຄ່ອງກັບເນື້ອໃນສັນຍາທີ່ໄດ້ຕົກລົງຮ່ວມກັນ ຫຼື ເກີດມີບັນຫາອື່ນ ທີ່ເປັນອຸປະສັກແກ່ການຈັດຕັ້ງປະຕິບັດສັນຍາ ຕ້ອງປຶກສາຫາລືກັນ ເພື່ອແກ້ໄຂບັນຫາຮ່ວມກັນໃຫ້ທັນກັບສະພາບການ.

## ໝວດທີ 5
## ການໂຈະ, ການປ່ຽນແປງ, ການຍົກເລີກ ແລະ ການສິ້ນສຸດສັນຍາ

**ມາດຕາ 31 ການໂຈະການປະຕິບັດສັນຍາ**

ການໂຈະການປະຕິບັດສັນຍາ ແມ່ນການຢຸດການດຳເນີນການ ຜະລິດ, ປຸງແຕ່ງ ແລະ ບໍລິການດ້ານກະສິກຳ ໂດຍຄູ່ສັນຍາເອງ ຫຼື ອີງການຈັດຕັ້ງລັດທີ່ກ່ຽວຂ້ອງ ເພື່ອໃຫ້ຄູ່ສັນຍາປັບປຸງ ແກ້ໄຂບັນຫາທີ່ເກີດຂຶ້ນໃນກຳນົດເວລາອັນແນ່ນອນ.

ສັນຍາ ອາດຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີຂອງຄູ່ສັນຍາຝ່າຍໃດໜຶ່ງ ເນື່ອງຈາກປະສົບບັນຫາ ຫຼື ບໍ່ສາມາດປະຕິບັດເນື້ອໃນຂອງສັນຍາໄດ້ ໂດຍໄດ້ຮັບການຮັບຮູ້ຈາກຄູ່ສັນຍາອີກຝ່າຍໜຶ່ງ;

2. ມີການສັ່ງໂຈະຈາກອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງເນື່ອງຈາກຄູ່ສັນຍາຝ່າຍໃດໜຶ່ງ ຫຼື ທັງໝົດ ດຳເນີນການຜະລິດ, ປຸງແຕ່ງ ຫຼື ບໍລິການກະສິກຳ ບໍ່ສອດຄ່ອງກັບຫຼັກການກະສິກຳແບບມີສັນຍາ ແລະ ມີການກ່າວເຕືອນຈາກເຈົ້າໜ້າທີ່ກ່ຽວຂ້ອງ.

**ມາດຕາ 32 ການປ່ຽນແປງສັນຍາ**

ສັນຍາ ອາດມີການປ່ຽນແປງ ດ້ວຍການເພີ່ມ ຫຼື ຫຼຸດບາງເນື້ອໃນສັນຍາ ບົນພື້ນຖານການຕົກລົງຮ່ວມກັນຂອງຄູ່ສັນຍາ.

ການປ່ຽນແປງສັນຍາ ຕ້ອງເຮັດເປັນລາຍລັກອັກສອນ ແລະ ໃຫ້ຂໍການຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງດຳລັດສະບັບນີ້.

**ມາດຕາ 33 ການຍົກເລີກສັນຍາ**

ສັນຍາ ອາດຖືກຍົກເລີກ ບົນພື້ນຖານການຕົກລົງເຫັນດີຂອງຄູ່ສັນຍາ ດ້ວຍການເຮັດເປັນລາຍລັກອັກສອນ ພ້ອມທັງລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງທີ່ກ່ຽວຂ້ອງຮັບຊາບພາຍໃນກຳນົດ ຫ້າວັນລັດຖະການ ນັບແຕ່ວັນລົງລາຍເຊັນຍົກເລີກສັນຍາເປັນຕົ້ນໄປ.

**ມາດຕາ 34 ການສິ້ນສຸດສັນຍາ**

ສັນຍາ ອາດສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສັນຍາ ໄດ້ຮັບການປະຕິບັດ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ;
2. ຄູ່ສັນຍາ ໄດ້ເຂົ້າຮ່ວມເປັນອັນດຽວກັນ;
3. ຄູ່ສັນຍາ ໄດ້ມີການຕົກລົງກັນ;
4. ສັນຍາ ບໍ່ສາມາດປະຕິບັດໄດ້;
5. ສັນຍາ ຖືກຍົກເລີກ;
6. ຄູ່ສັນຍາ ຝ່າຍໃດໜຶ່ງໄດ້ເສຍຊີວິດ ແລະ ບໍ່ມີຜູ້ສືບຕໍ່ປະຕິບັດໄດ້;
7. ນິຕິບຸກຄົນທີ່ເປັນຄູ່ສັນຍາ ໄດ້ຖືກຍຸບເລີກ ຫຼື ລົ້ມລະລາຍ.

## ໝວດທີ 6
## ການສົ່ງເສີມກະສິກຳແບບມີສັນຍາ

**ມາດຕາ 35 ການສົ່ງເສີມກະສິກຳແບບມີສັນຍາ**

ການສົ່ງເສີມກະສິກຳແບບມີສັນຍາ ມີ ດັ່ງນີ້:

1. ການສົ່ງເສີມການປູກຝັງ;
2. ການສົ່ງເສີມການລ້ຽງສັດ ແລະ ສັດນ້ຳ;
3. ການສົ່ງເສີມການປະມົງ;
4. ການສົ່ງເສີມການປຸງແຕ່ງກະສິກຳຂັ້ນຕົ້ນ;
5. ການສົ່ງເສີມການບໍລິການກະສິກຳ;
6. ການປົກປ້ອງກະສິກຳແບບມີສັນຍາ;
7. ນະໂຍບາຍອື່ນ ທີ່ລັດຖະບານກຳນົດ ໃນແຕ່ລະໄລຍະ.

## ມາດຕາ 36 ການສົ່ງເສີມການປູກຝັງ

ລັດ ກຳນົດ ແລະ ປະຕິບັດນະໂຍບາຍສົ່ງເສີມການປູກຝັງທີ່ຕິດພັນກັບກະສິກຳແບບມີສັນຍາ ດັ່ງນີ້:

1. ຄຸ້ມຄອງ ແລະ ສົ່ງເສີມໃຫ້ນຳໃຊ້ທີ່ດິນສຳລັບການປູກຝັງຫຼາຍຮອບວຽນຕໍ່ປີ;

2. ສະໜັບສະໜູນ ແລະ ອຳນວຍຄວາມສະດວກແກ່ການນຳໃຊ້ປັດໄຈການຜະລິດໃຫ້ພຽງພໍກັບຄວາມຕ້ອງການ;

3. ສົ່ງເສີມດ້ານຄຸນນະພາບ ແລະ ການປຸງແຕ່ງພືດ ດ້ວຍການເຮັດສັນຍາລະຫວ່າງ ຊາວກະສິກອນ ຫຼື ຜູ້ຜະລິດ ກັບຜູ້ປະກອບການ ຫຼື ຜູ້ຮັບຊື້ຜົນຜະລິດ ຢ່າງເປັນທຳ;

4. ສົ່ງເສີມການຜະລິດເພື່ອສົ່ງອອກພືດ ແລະ ຜະລິດຕະພັນພືດ ດ້ວຍການພັດທະນາເຕັກນິກທີ່ທັນສະໄໝ ເຂົ້າໃນວຽກງານສຸຂານາໄມ ແລະ ສຸຂານາໄມພືດ ໃຫ້ມີຄວາມເຂັ້ມແຂງ;

5. ພັດທະນາ ບຸກຄະລາກອນ ແລະ ຜູ້ອອກແຮງງານ ເພື່ອຕອບສະໜອງຄວາມຕ້ອງການດ້ານວິຊາການປູກຝັງ ດ້ວຍການ ຝຶກອົບຮົມ, ສຳມະນາ ແລະ ແລກປ່ຽນບົດຮຽນຢ່າງເປັນປົກກະຕິ, ຕໍ່ເນື່ອງ;

6. ຫຼຸດຜ່ອນຄວາມສ່ຽງຕໍ່ການປູກພືດ ດ້ວຍການສ້າງລະບົບຕາໜ່າງປ້ອງກັນພືດ, ອຸຕຸກະເສດ ແລະ ລະບົບການເຂົ້າເຖິງຂໍ້ມູນຂ່າວສານດ້ານການປ້ອງກັນພືດ ໃຫ້ມີຄວາມເຂັ້ມແຂງ, ຄໍ້າປະກັນລາຄາຂັ້ນຕໍ່າໃນການປູກພືດທີ່ມີທ່າແຮງເປັນສິນຄ້າ ແລະ ສ້າງຄັງແຮປັດໄຈການຜະລິດໃນເວລາເກີດໄພພິບັດທຳມະຊາດ;

7. ສົ່ງເສີມການນຳໃຊ້ວິທະຍາສາດ, ເຕັກນິກ-ເຕັກໂນໂລຊີ ທັນສະໄໝ ແລະ ພະລັງງານ ດ້ວຍການອຳນວຍຄວາມສະດວກໃນການນຳເຂົ້າ ພາຫະນະ, ເຄື່ອງມື ແລະ ອຸປະກອນ ທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ ຕິດພັນກັບການສົ່ງເສີມການຜະລິດພາຍໃນໃຫ້ຫຼາຍຂຶ້ນ ແລະ ຫຼຸດຄ່າກະແສໄຟຟ້າກະສິກຳ;

8. ສ້າງເງື່ອນໄຂສະດວກໃຫ້ແກ່ຊາວກະສິກອນ ຫຼື ຜູ້ຜະລິດກະສິກຳ ສາມາດເຂົ້າເຖິງສິນເຊື່ອທີ່ມີດອກເບ້ຍເໝາະສົມ ດ້ວຍການຈັດສັນທຶນ ແລະ ງົບປະມານລັດເຂົ້າໃນວຽກງານດັ່ງກ່າວ, ຜ່ອນຜັນໄລຍະເວລາຊຳລະສິນເຊື່ອໃນກໍລະນີເກີດໄພພິບັດທຳມະຊາດ ແລະ ມີນະໂຍບາຍສິນເຊື່ອຖົມຊຸມດອກເບ້ຍໃນແຕ່ລະໄລຍະ.

## ມາດຕາ 37 ການສົ່ງເສີມການລ້ຽງສັດ ແລະ ສັດນໍ້າ

ລັດ ກຳນົດ ແລະ ປະຕິບັດນະໂຍບາຍສົ່ງເສີມການລ້ຽງສັດ ແລະ ສັດນໍ້າ ທີ່ຕິດພັນກັບກະສິກຳແບບມີສັນຍາ ດັ່ງນີ້:

1. ສົ່ງເສີມການນຳໃຊ້ທີ່ດິນສຳລັບການລ້ຽງສັດ ແລະ ສັດນໍ້າ ດ້ວຍການປູກພືດອາຫານສັດ, ການຜະລິດແນວພັນພືດອາຫານສັດ, ການສ້າງຟາມລ້ຽງສັດທີ່ໄດ້ມາດຕະຖານ ແລະ ຫຼຸດຜ່ອນຄ່າທຳນຽມ, ຄ່າບໍລິການວັດແທກຂຶ້ນທະບຽນອອກໃບຕາດິນສຳລັບການລ້ຽງສັດ ແລະ ສັດນໍ້າ ຫ້າສິບ ສ່ວນຮ້ອຍ;

2. ສົ່ງເສີມການນຳໃຊ້ພະລັງງານ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມທີ່ເໝາະສົມ ດ້ວຍການຫຼຸດຄ່າກະແສໄຟຟ້າສຳລັບໂຮງງານຜະລິດອາຫານສັດ, ໂຮງງານຢາສຳລັບສັດ, ໂຮງຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນສັດ, ຟາມລ້ຽງສັດ ແລະ ສັດນໍ້າທີ່ໄດ້ມາດຕະຖານ, ຍົກເວັ້ນພາສີ-ອາກອນນຳເຂົ້າອຸປະກອນເຕັກໂນໂລຊີທັນສະໄໝ ແລະ ສັດນໍ້າ, ອຸປະກອນຜະລິດພະລັງງານທົດແທນ, ແກັສຊີວະພາບ, ອຸປະກອນບຳບັດສິ່ງເສດເຫຼືອ ຫຼື ມົນລະພິດທີ່ເກີດຈາກການລ້ຽງສັດ ແລະ ສັດນໍ້າ;

3. ປະກັນຄວາມສ່ຽງຕໍ່ການລ້ຽງສັດ ແລະ ສັດນໍ້າ ດ້ວຍການສ້າງຕັ້ງກອງທຶນສຳລັບແຊກແຊງລາຄາ ຫຼື ປະກັນລາຄາຂັ້ນຕໍ່າ, ສົ່ງເສີມກຸ່ມ, ສະຫະກອນ ແລະ ການຈັດຕັ້ງອື່ນ ສ້າງກອງທຶນພັດທະນາການລ້ຽງສັດ;

4. ສົ່ງເສີມດ້ານຄຸນນະພາບຂອງຜະລິດຕະພັນສັດ ແລະ ສັດນໍ້າ ດ້ວຍການສົ່ງເສີມໃຫ້ສ້າງຕັ້ງໂຮງຂ້າສັດ ແລະ ໂຮງປຸງແຕ່ງຊີ້ນທີ່ທັນສະໄໝ ແລະ ຖືກຫຼັກສຸຂານາໄມ ຕາມມາດຕະຖານສາກົນ ລວມທັງການສ້າງສາງເກັບຮັກສາ, ລົງຂົນສົ່ງ ແລະ ບ່ອນວາງຂາຍ;

5. ສົ່ງເສີມດ້ານການຄ້າ ແລະ ການຕະຫຼາດ ດ້ວຍການສ້າງລະບົບຂໍ້ມູນຂ່າວສານຕະຫຼາດສັດ, ຜະລິດຕະພັນສັດ ແລະ ສັດນ້ຳ, ຫຼຸດການນຳເຂົ້າ, ຊຸກຍູ້ໃຫ້ເຮັດສັນຍາຜູກພັນ ລະຫວ່າງ ຜູ້ຜະລິດ ແລະ ຜູ້ຊື້;

6. ປະຕິບັດນະໂຍບາຍແຮງງານ ແລະ ສະຫວັດດີການຕໍ່ຜູ້ລ້ຽງສັດ ແລະ ສັດນ້ຳ ຢ່າງເໝາະສົມ ເປັນຕົ້ນ ການໃຫ້ບັດຢັ້ງຢືນການອອກແຮງແກ່ຜູ້ລ້ຽງສັດ ແລະ ສັດນ້ຳ, ມີວັນພັກ, ເງິນອຸດໜູນ, ເງິນເພີ່ມໂມງ, ໃຫ້ໃບຍ້ອງຍໍ;

7. ພັດທະນາບຸກຄະລາກອນ ສົ່ງເສີມການລ້ຽງສັດ, ສັດຕະວະແພດ ແລະ ສັດນ້ຳ ໃຫ້ມີຄວາມຮູ້, ຄວາມສາມາດ;

8. ດ້ານການເງິນ ແລະ ເຂົ້າເຖິງແຫຼ່ງທຶນ ດ້ວຍການເພີ່ມງົບປະມານ ເຂົ້າໃນການພັດທະນາ, ຍົກເວັ້ນ ຫຼື ຫຼຸດຜ່ອນປັດໄຈການຜະລິດ, ຜ່ອນຜັນໄລຍະເວລາຊຳລະສິນເຊື່ອໃນກໍລະນີເກີດໄພພິບັດທຳມະຊາດ ແລະ ມີນະໂຍບາຍສິນເຊື່ອຖົມຊົດດອກເບ້ຍໃນແຕ່ລະໄລຍະ.

**ມາດຕາ 38 ການສົ່ງເສີມການປະມົງ**

ລັດ ກຳນົດ ແລະ ປະຕິບັດນະໂຍບາຍສົ່ງເສີມການປະມົງ ທີ່ຕິດພັນກັບກະສິກຳແບບມີສັນຍາ ດັ່ງນີ້:

1. ກຳນົດເຂດການປະມົງ, ສະຖານທີ່ ຫຼື ແຫຼ່ງນ້ຳທີ່ເປັນບ່ອນລ້ຽງສັດນ້ຳ ບົນພື້ນຖານຂໍ້ມູນຕົວຈິງທີ່ໄດ້ຈາກການສຳຫຼວດ ພ້ອມທັງແຈ້ງໃຫ້ຜູ້ທີ່ມີຈຸດປະສົງລ້ຽງສັດນ້ຳ ຊາບ;

2. ຫຼຸດຜ່ອນ ຫຼື ຍົກເວັ້ນຄ່າທຳນຽມ, ຄ່າບໍລິການ ກ່ຽວກັບການຂຶ້ນທະບຽນອອກໃບຕາດິນ ສຳລັບພື້ນທີ່ກຳນົດເປັນເຂດການປະມົງ;

3. ຜ່ອນຜັນໄລຍະເວລາຊຳລະສິນເຊື່ອໃນກໍລະນີເກີດໄພພິບັດທຳມະຊາດ ແລະ ມີນະໂຍບາຍສິນເຊື່ອຖົມຊົດດອກເບ້ຍໃນແຕ່ລະໄລຍະ;

4. ຫຼຸດຜ່ອນຄ່າກະແສໄຟຟ້າ ສຳລັບໂຮງງານຜະລິດອາຫານປາ ແລະ ຟາມລ້ຽງສັດນ້ຳທີ່ໄດ້ມາດຕະຖານ ຕາມການຢັ້ງຢືນຂອງກະຊວງກະສິກຳ ແລະປ່າໄມ້;

5. ຍົກເວັ້ນພາສີ ແລະ ອາກອນນຳເຂົ້າອຸປະກອນເຕັກໂນໂລຊີທັນສະໄໝ ທີ່ນຳໃຊ້ເຂົ້າໃນການລ້ຽງສັດນ້ຳ;

6. ສົ່ງເສີມໃຫ້ຈັດຕັ້ງເປັນ ກຸ່ມ, ສະຫະກອນ ແລະ ສະມາຄົມ ດ້ວຍການຍົກເວັ້ນການເກັບຄ່າທຳນຽມ ແລະ ຄ່າບໍລິການ ອອກໃບອະນຸຍາດສ້າງຕັ້ງ ແລະ ໃບທະບຽນ ເພື່ອສົ່ງເສີມ ການລ້ຽງ, ການຫາ ແລະ ການປຸງແຕ່ງສັດນ້ຳ ໃຫ້ມີປະສິດທິຜົນ.

**ມາດຕາ 39 ການສົ່ງເສີມການປຸງແຕ່ງກະສິກຳຂັ້ນຕົ້ນ**

ລັດ ສົ່ງເສີມການປຸງແຕ່ງກະສິກຳຂັ້ນຕົ້ນ ດ້ວຍການກຳນົດ ແລະ ປະຕິບັດນະໂຍບາຍຕໍ່ ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ທີ່ດຳເນີນການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກ, ເພີ່ມຄວາມຫຼາກຫຼາຍ ແລະ ເພີ່ມມູນຄ່າໃຫ້ແກ່ສິນຄ້າກະສິກຳ ທັງເປັນການສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ແກ່ຊາວກະສິກອນ ຊຶ່ງຈະໄດ້ຮັບນະໂຍບາຍ ດັ່ງນີ້:

1. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນການເຂົ້າເຖິງແຫຼ່ງທຶນທີ່ມີດອກເບ້ຍຕ່ຳ, ການຄ້ຳປະກັນດ້ານສິນເຊື່ອ ແລະ ການເຊົ່າສິນເຊື່ອ ຕາມກົດໝາຍກຳນົດ;

2. ໄດ້ຮັບນະໂຍບາຍຍົກເວັ້ນຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການອອກໃບອະນຸຍາດດຳເນີນກິດຈະການປຸງແຕ່ງກະສິກຳ, ໄດ້ຮັບນະໂຍບາຍຍົກເວັ້ນ ຫຼື ຫຼຸດຜ່ອນການເສຍອາກອນກຳໄລຈາກການດຳເນີນກິດຈະການປຸງແຕ່ງກະສິກຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

3. ໄດ້ຮັບການບໍລິການດ້ານວິຊາການ ແລະ ຄໍາປຶກສາ ກ່ຽວກັບການດໍາເນີນກິດຈະການປຸງແຕ່ງກະສິກໍາຂັ້ນຕົ້ນ ຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອຮັບປະກັນການປຸງແຕ່ງກະສິກໍາ ໃຫ້ເຕີບໃຫຍ່ ແລະ ເຂັ້ມແຂງ;

4. ໄດ້ຮັບການສົ່ງເສີມໃຫ້ເຂົ້າຮ່ວມງານວາງສະແດງສິນຄ້າ, ການໂຄສະນາສິນຄ້າ, ການຈັບຄູ່ທຸລະກິດ ແລະ ການໄດ້ຮັບໂອກາດຈາກການຈັດຕັ້ງລັດໃນການສະໜອງສິນຄ້າທີ່ປຸງແຕ່ງພາຍໃນປະເທດ;

5. ໄດ້ຮັບການສົ່ງເສີມ ແລະ ອໍານວຍຄວາມສະດວກ ໃນການຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດຕໍ່ຊັບສິນທາງປັນຍາທີ່ເກີດຈາກການປຸງແຕ່ງກະສິກໍາຂັ້ນຕົ້ນພາຍໃນປະເທດ;

6. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບການປຸງແຕ່ງກະສິກໍາຂັ້ນຕົ້ນ ຢ່າງສະດວກ ແລະ ທັນການ ເປັນຕົ້ນ ຂໍ້ມູນທີ່ຕິດພັນກັບການຜະລິດ, ການຄ້າ, ການບໍລິການ ທີ່ສັງຄົມມີຄວາມຕ້ອງການສູງ.

**ມາດຕາ 40 ການສົ່ງເສີມການບໍລິການກະສິກໍາ**

ລັດ ສົ່ງເສີມການບໍລິການກະສິກໍາ ທີ່ຕິດພັນກັບກະສິກໍາແບບມີສັນຍາ ດັ່ງນີ້:

1. ການບໍລິການບຸກເບີກເນື້ອທີ່ການຜະລິດ, ການໄຖ, ຄາດ, ປູກ, ບົວລະບັດຮັກສາ, ເກັບກ່ຽວຜົນ

ຜະລິດ, ເກັບຮັກສາຜົນຜະລິດ, ປຸງແຕ່ງ ແລະ ຈາໜ່າຍສິນຄ້າກະສິກໍາປະເພດພືດ, ຜະລິດຕະພັນພືດ ແລະ ວັດ ຖຸຕ້ອງຄວບຄຸມ;

2. ການບໍລິການຄົ້ນຄວ້າ ແລະ ທົດລອງກ່ຽວກັບການລ້ຽງສັດ, ການອີໄຈອາຫານສັດ, ການກັນ ແລະ ຄວບຄຸມພະຍາດລະບາດສັດ, ການປິ່ນປົວສັດ, ການເຄື່ອນຍ້າຍສັດ, ການຂ້າສັດ, ການປຸງແຕ່ງ ແລະ ຈໍາໜ່າຍ ຜະລິດຕະພັນສິນຄ້າກ່ຽວກັບສັດ.

ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ທີ່ດາເນີນການບໍລິການກະສິກໍາ ຕາມທີ່ໄດ້ການົດໄວ້ໃນວັກ ໜຶ່ງ ຂອງມາດຕານີ້ ຈະໄດ້ຮັບການອໍານວຍຄວາມສະດວກຈາກພາກລັດ ໃນການເຂົ້າເຖິງແຫຼ່ງທຶນ, ຍົກເວັ້ນ ຫຼື ຫຼຸດຜ່ອນການເສຍພາສີ ແລະ ອາກອນ, ການຊ່ວຍເຫຼືອ ຫຼື ໃຫ້ຄາປຶກສາດ້ານວິຊາການກະສິກໍາ, ການເຂົ້າເຖິງຂໍ້ມູນ ຂ່າວສານ ແລະ ການໃຫ້ການບໍລິການດ້ານປັດໃຈການຜະລິດກະສິກໍາ ແກ່ຄູ່ສັນຍາຂອງຕົນ ເປັນຕົ້ນ ຝຸ່ນ, ແນວພັນພືດ, ແນວພັນສັດ, ຢາປາບສັດຕູພືດ, ຢາສັດຕະວະແພດ.

**ມາດຕາ 41 ການປົກປ້ອງກະສິກໍາແບບມີສັນຍາ**

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ທີ່ດາເນີນກະສິກໍາແບບມີສັນຍາປະເພດໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງດໍາລັດສະບັບນີ້ ບົນພື້ນຖານກົດໝາຍຂອງ ສປປ ລາວ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

ໃນກໍລະນີມີຂໍ້ຂັດແຍ່ງຈາກການດໍາເນີນກະສິກໍາແບບມີສັນຍາ ເປັນຕົ້ນ ບັນຫາດ້ານລາຄາຕົກຕໍ່າ, ສິນຄ້າບໍ່ໄດ້ຕາມມາດຕະຖານ ຫຼື ຄວາມຕ້ອງການຂອງຕະຫຼາດ, ຂາດຕະຫຼາດຈໍາໜ່າຍ ໜ່ວຍງານກ່ຽວຂ້ອງຂອງລັດທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ເປັນຜູ້ໃຫ້ຄວາມຊ່ວຍເຫຼືອ ແລະ ສະໜັບສະໜູນການແກ້ໄຂບັນຫາຢ່າງເໝາະສົມ ແລະ ຍຸຕິທໍາ.

## ໝວດທີ 7
## ຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ

**ມາດຕາ 42 ຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ**

ຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງ ຕັ້ງຈາກນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ມີພາລະບົດບາດ ໃນການຄົ້ນຄວ້າ, ຊີ້ນຳ, ຊຸກຍູ້ ແລະ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານສົ່ງເສີມກະສິກຳແບບມີສັນຍາ ໂດຍກົມ

ສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້ ເປັນກອງເລຂາ.

ຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ ປະກອບດ້ວຍ:

1. ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ;
5. ຮອງລັດຖະມົນຕີ ກະຊວງຍຸຕິທຳ ເປັນຄະນະ;
6. ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ**

ຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄຳເຫັນຕໍ່ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບກະສິກຳແບບມີສັນ ຍາ ເພື່ອໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມ ຂອງປະເທດ ໃນແຕ່ລະໄລຍະ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບກະສິກຳແບບມີສັນຍາ;
3. ຊີ້ນຳ ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຫັນເອົານະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ຂອງຂັ້ນເທິງ ມາເປັນແຜນງານ, ແຜນການ ແລະ ໂຄງການລະອຽດຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
4. ຈັດ ຫຼື ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ກ່ຽວກັບວຽກງານກະສິກຳແບບມີສັນຍາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊີນ ແລະ ຕາມການມອບໝາຍຂອງຂັ້ນເທິງ;
5. ຊຸກຍູ້, ແນະນຳ, ຕິດຕາມ ແລະ ກວດກາການເຄື່ອນໄຫວວຽກງານກະສິກຳແບບມີສັນຍາ ຂອງບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
6. ພົວພັນ, ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກະສິກຳແບບມີສັນຍາ ຕາມການມອບໝາຍຂອງຂັ້ນເທິງ;
7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສົ່ງເສີມກະສິກຳແບບມີສັນຍາຂອງຕົນ ໃຫ້ລັດຖະບານ ໃນແຕ່ລະໄລຍະ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ**

ກອງເລຂາຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບການສົ່ງເສີມການຜະລິດກະສິກຳແບບມີສັນຍາ ເພື່ອສະເໜີຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ ພິຈາລະນາ;

2. ເກັບກຳ ແລະ ສັງລວມຂໍ້ມູນ ກ່ຽວກັບການຜະລິດກະສິກຳແບບມີສັນຍາໃນປະເພດ ແລະ ຮູບແບບຕ່າງໆ ເພື່ອລາຍງານຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ ໃນແຕ່ລະໄລຍະ;

3. ສ້າງ ແລະ ພັດທະນາ ລະບົບຖານຂໍ້ມູນ ກ່ຽວກັບກະສິກຳແບບມີສັນຍາ ເພື່ອຮັບປະກັນການນຳໃຊ້ສະດວກ ແລະ ທົ່ວເຖິງ;

4. ປະສານສົມທົບກັບ ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ສົ່ງເສີມຈັດຕັ້ງປະຕິບັດວຽກງານກະສິກຳແບບມີສັນຍາ;

5. ຈັດ ຫຼື ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ກ່ຽວກັບວຽກງານກະສິກຳແບບມີສັນຍາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊີນ ແລະ ຕາມການມອບໝາຍຂອງຂັ້ນເທິງ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ ໃນແຕ່ລະໄລຍະ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ ຂອງຄະນະກຳມະການສົ່ງເສີມການຜະລິດກະສິກຳແບບມີສັນຍາ.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 45 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ຫຼື ບໍ່ໃຫ້ຄວາມຮ່ວມມື ໃນວຽກງານກະສິກຳແບບມີສັນຍາ;
2. ປອມແປງ, ບິດເບືອນຂໍ້ມູນ, ນຳໃຊ້ ແລະ ແລກປ່ຽນຂໍ້ມູນ ໃນທາງທີ່ບໍ່ຖືກຕ້ອງ;
3. ເຜີຍແຜ່ຂໍ້ມູນຂອງຜູ້ປະກອບການ ຫຼື ນັກລົງທຶນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ເປັນສື່ກາງໃນການ ໃຫ້, ຮັບສິນບົນ ຫຼື ຜົນປະໂຫຍດອື່ນ ຈາກວຽກງານກະສິກຳແບບມີສັນຍາ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 46 ຂໍ້ຫ້າມສຳລັບຄູ່ສັນຍາ**

ຫ້າມຄູ່ສັນຍາ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຢຸດຕິການປະຕິບັດສັນຍາ ໂດຍປາສະຈາກການແຈ້ງໃຫ້ຄູ່ສັນຍາຮັບຊາບເປັນລາຍລັກອັກສອນຢ່າງນ້ອຍ ຫົກສິບ ວັນ;
2. ໂຄສະນາ ຫຼື ໃສ່ຮ້າຍປ້າຍສີຄູ່ສັນຍາຂອງຕົນ;
3. ລັກຂາຍຜົນຜະລິດທີ່ໄດ້ລະບຸໄວ້ໃນສັນຍາ ໃຫ້ກັບຜູ້ອື່ນ ໂດຍບໍ່ໄດ້ຮັບການເຫັນດີຈາກຄູ່ສັນຍາ;
4. ນຳໃຊ້ປັດໄຈການຜະລິດ ບໍ່ຖືກເປົ້າໝາຍທີ່ກຳນົດໄວ້;
5. ປະຕິເສດການເກັບຊື້ຜົນຜະລິດໃນໄລຍະເກັບກ່ຽວ ຫຼື ໃນເວລາຜົນຜະລິດລົ້ນຕະຫຼາດ;

6. ບັງຄັບ, ນາບຂູ່, ກົດໜ່ວງ ຖ່ວງດຶງ, ຂັດຂວາງ ຫຼື ໃຊ້ວາຈາທີ່ບໍ່ເໝາະສົມ ຕໍ່ຄູ່ສັນຍາ, ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

7. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 47 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ໜ້າທີ່ທີ່ກ່ຽວຂ້ອງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ ແລະ ໜ້າທີ່ຕຳແໜ່ງ ກົດໜ່ວງຖ່ວງດຶງ, ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງ ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຊາວກະສິກອນ, ລັດ ແລະ ລວມໝູ່;

2. ເປີດເຜີຍຄວາມລັບ ຂອງລັດ ແລະ ຄູ່ສັນຍາ ໂດຍບໍ່ໄດ້ຮັບອະນຸຍາດ;

3. ໂຄສະນາປັດໄຈການຜະລິດເກີນຈິງ ຫຼື ໂດຍບໍ່ມີຫຼັກຖານທາງດ້ານວິທະຍາສາດ;

4. ສ້າງຄວາມເສຍຫາຍແກ່ຜູ້ຜະລິດ, ຜູ້ປະກອບການ ແລະ ຜົນປະໂຫຍດຂອງລັດ;

5. ຮຽກ ຫຼື ເກັບຄ່າທຳນຽມ ຫຼື ຄ່າບໍລິການ ແລະ ນຳໃຊ້ລາຍຮັບ ທີ່ບໍ່ຖືກຕ້ອງຕາມລະບຽບການ;

6. ເມີນເສີຍຕໍ່ລະບຽບການ, ຫຼັກການ ໃນການກວດກາວຽກງານກະສິກຳແບບມີສັນຍາ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ການຄຸ້ມຄອງ ແລະ ການກວດກາວຽກງານກະສິກຳແບບມີສັນຍາ

**ມາດຕາ 48 ອົງການຄຸ້ມຄອງ ແລະ ກວດກາວຽກງານກະສິກຳແບບມີສັນຍາ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນ ດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳແບບມີສັນຍາ.

ອົງການຄຸ້ມຄອງ ແລະ ກວດກາວຽກງານກະສິກຳແບບມີສັນຍາ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;

2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;

3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານ ກະສິກຳແບບມີສັນຍາ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບກະສິກຳແບບມີສັນຍາ;

4. ອອກ ຂໍ້ຕົກລົງ, ຄໍາສັ່ງ ແລະ ຄໍາແນະນໍາ ກ່ຽວກັບກະສິກໍາແບບມີສັນຍາ;

5. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານກະສິກໍາແບບມີສັນຍາ ໃນຂອບເຂດທົ່ວປະເທດ;

6. ບໍາລຸງ, ກໍ່ສ້າງ ແລະ ຍົກລະດັບ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານກະສິກໍາແບບມີສັນຍາ ພ້ອມທັງປູກຈິດສໍານຶກໃຫ້ແກ່ທຸກພາກສ່ວນໃນສັງຄົມ ໄດ້ຮັບຊາບ ແລະ ປະຕິບັດວຽກງານດັ່ງກ່າວຢ່າງກວ້າງຂວາງ;

7. ສ້າງຄູ່ມື, ຈັດກອງປະຊຸມ, ຝຶກອົບຮົມ ແລະ ສໍາມະນາ ກ່ຽວກັບກະສິກໍາແບບມີສັນຍາ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

8. ຮັບ ແລະ ພິຈາລະນາແກ້ໄຂຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ກ່ຽວກັບກະສິກໍາແບບມີສັນຍາ;

9. ປະສານສົມທົບ ກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຊຸກຍູ້, ສົ່ງເສີມ ການພັດທະນາກະສິກໍາແບບມີສັນຍາ;

10. ພົວພັນ, ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກະສິກໍາແບບມີສັນຍາ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກະສິກໍາແບບມີສັນຍາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ**

ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບກະສິກໍາແບບມີສັນຍາ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບກະສິກໍາແບບມີສັນຍາ;

3. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານກະສິກໍາແບບມີສັນຍາ ໂດຍສົມທົບກັບພະແນກການ, ອົງການ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ;

4. ບໍາລຸງ, ກໍ່ສ້າງ ແລະ ຍົກລະດັບ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານກະສິກໍາແບບມີສັນຍາ;

5. ເກັບກໍາ, ສັງລວມ ແລະ ສ້າງຖານຂໍ້ມູນ ກ່ຽວກັບວຽກງານກະສິກໍາແບບມີສັນຍາ ພ້ອມທັງປູກຈິດສໍານຶກໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບວຽກງານດັ່ງກ່າວ;

6. ຮັບ ແລະ ພິຈາລະນາແກ້ໄຂຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ກ່ຽວກັບກະສິກໍາແບບມີສັນຍາ;

7. ປະສານສົມທົບ ກັບພະແນກການ, ອົງການ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ ເພື່ອຊຸກ ຍູ້, ສົ່ງເສີມກະສິກໍາແບບມີສັນຍາ;

8. ພົວພັນ, ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກະສິກໍາແບບມີສັນຍາ ຕາມການມອບໝາຍຂອງຂັ້ນເທິງ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກະສິກໍາແບບມີສັນຍາ ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານກະສິກຳແບບມີສັນຍາ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບກະສິກຳແບບມີສັນຍາ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ຮັບຮູ້ ແລະ ເຂົ້າໃຈ;

3. ຊຸກຍູ້, ສົ່ງເສີມ ແລະ ເອື້ອຍອານວຍຄວາມສະດວກແກ່ການ ບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ກ່ຽວກັບຂັ້ນຕອນ, ວິທີການ ສ້າງ ແລະ ການປະຕິບັດສັນຍາ.

4. ພິຈາລະນາ ແລະ ຢັ້ງຢືນ ສັນຍາ ພ້ອມທັງຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ໂດຍສົມທົບກັບຫ້ອງການ, ອົງການ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ;

5. ບຳລຸງ, ກໍ່ສ້າງ ແລະ ຍົກລະດັບ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານກະສິກຳແບບມີສັນຍາ;

6. ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນ ກ່ຽວກັບກະສິກຳແບບມີສັນຍາ ພ້ອມທັງປູກຈິດສຳນຶກໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບກະສິກຳແບບມີສັນຍາ;

7. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ກ່ຽວກັບວຽກງານກະສິກຳແບບມີສັນຍາ;

8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກະສິກຳແບບມີສັນຍາ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກະສິກຳແບບມີສັນຍາ ໃຫ້ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບຂະແໜງການກະສິກຳ ແລະ ປ່າໄມ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 53 ເນື້ອໃນການກວດກາ**

ການກວດກາວຽກງານກະສິກຳແບບມີສັນຍາ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດ ດຳລັດສະບັບນີ້ ແລະ ລະບຽບການ ກ່ຽວກັບກະສິກຳແບບມີສັນຍາ;

2. ການປະຕິບັດໜ້າທີ່ ຂອງຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ ແລະ ກອງເລຂາຄະນະກຳມະການສົ່ງເສີມກະສິກຳແບບມີສັນຍາ;

3. ການສ້າງ ແລະ ປະຕິບັດແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບກະສິກຳແບບມີສັນຍາ;

4. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 54 ຮູບການການກວດກາ**

ການກວດກາວຽກງານກະສິກຳແບບມີສັນຍາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 55 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຊຸກຍູ້, ສົ່ງເສີມ, ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານກະສິກຳແບບມີສັນຍາ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 56 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 57 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຈັດຕັ້ງປະຕິບັດ ດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 58 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ......................... 2024 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**